# 48 ຊົ່ວໂມງໃນນາລົກ

ເຫດການປະຫຼາດຜິດທຳມະດາໃນການຕາຍຄືນທີ່ຂ້າພະເຈົ້າໄດ້ຮູ້ມາກໍຄືເລື່ອງຂອງນັກໂທດຢອດເລນນອກ ເຊິ່ງເປັນຂະໂມຍລັກມ້າຜູ້ມີຊື່ສຽງທີ່ເມືອງເຈຟເຟີສັນ ເວລານັ້ນລາວກຳລັງຮັບໂທດໃນຄຸກເປັນເທື່ອທີ່ສອງ.

ໃນລະຫວ່າງລະດູໜາວລາວຖືກສົ່ງຕົວໄປເຮັດວຽກໃນເໝືອງຖ່ານຫີນແລະໃນບ່ອນລາວພວມເຮັດວຽກຢູ່ນັ້ນ ເບິ່ງແລ້ວວ່າຈະບໍ່ປອດໄພປານໃດ ລາວຈຶ່ງລາຍງານເລື່ອງນີ້ໃຫ້ເຈົ້າໜ້າທີ່ຮູ້ ເຈົ້າໜ້າທີ່ກໍມາກວດເບິ່ງແລ້ວລົງຄວາມເຫັນວ່າບໍລິເວນນັ້ນປອດໄພບໍ່ມີອັນໃດຜິດປົກກະຕິເລີຍແລະສັ່ງໃຫ້ເລນນອກຄືນໄປເຮັດວຽກຕາມເດີມ ນັກໂທດເລນນອກກໍຄືນໄປຕາມຄຳສັ່ງແຕ່ລາວເຮັດວຽກຕໍ່ໄປບໍ່ເຖິງຊົ່ວໂມງແພດານເໝືອງກໍຍຸບລົງມາທັບຕົວລາວໄວ້ຈົນມິດແລະລາວຖືກຝັງຢູ່ດັ່ງນັ້ນເຖິງສອງຊົ່ວໂມງເຕັມໆ ຈົນວ່າເຖິງເວລາຮັບປະທານອາຫານແລງກໍໄດ້ຮູ້ວ່າມີນັກໂທດເສຍຜູ້ໜຶ່ງ ເຈົ້າໜ້າທີ່ຈຶ່ງຄົ້ນຫາບຶດໜຶ່ງກໍພົບເລນນອກຖືກຝັງຢູ່ກ້ອງກ້ອນຫີນແລະຊີວິດກໍຄົງບໍ່ເຫຼືອແລ້ວ.

ຮ່າງຂອງເລນນອກໄດ້ເອົາຂຶ້ນມາເທິງນາຍແພດປະຈຳຄຸກກໍມາກວດເບິ່ງແລະບອກວ່າເລນນອກຕາຍແລ້ວຢ່າງແນ່ນອນ ສົບຂອງລາວຈຶ່ງໄດ້ຫາມໄປຫາໂຮງໝໍ, ຈັດແຈງລ້າງເຮັດຄວາມສະອາດແລະຕົກແຕ່ງເພື່ອເອົາໄປຝັງ ເມື່ອຕີຫີບໃສ່ສົບແລ້ວແລະສາສດາຈານຜູ້ເຮັດພິທີຝັງມາເຖິງໂຮງໝໍແລ້ວເຈົ້າໜ້າທີ່ກໍສັ່ງໃຫ້ນັກໂທດສອງຄົນຍົກສົບຂຶ້ນໄປມັຽນໄວ້ໂຮງເຢັນ ນັກໂທດທັງສອງກໍຈັດການຫາມຜູ້ໜຶ່ງຫາມທາງຫົວ, ຜູ້ໜຶ່ງຫາມທາງຕີນແຕ່ພໍຫາມສົບໄປໄດ້ເຄິ່ງທາງຄົນທີ່ຫາມທາງຫົວກໍບັງເອີນເຊໄປເຮັດໃຫ້ສົບຫຼຸດຈາກມື ຫົວຂອງຄົນຕາຍກໍຟາດກັບພື້ນດິນແລະທັນທີທັນໃດຄົນທີ່ເຫັນອາການກໍລ້ອນດ້ວຍຄວາມປະຫຼາດໃຈຍິ່ງເພາະໄດ້ຍິນສຽງຄ່ອຍ ໆ ຈາກສົບນັ້ນແລະບໍ່ຊ້າກໍເຫັນສັບຄ່ອຍ ໆ ມືນຕາຂຶ້ນສະແດງອາການອື່ນ ໆ ໃຫ້ເຫັນວ່າຍັງມີຊີວິດຢູ່.

ເຂົາຮີບໄປເຊີນນາຍໝໍມາອີກເຄິ່ງຊົ່ວໂມງຕໍ່ມານາຍໝໍມາເຖິງ "ຄົນຕາຍ" ນັ້ນໄດ້ຮ້ອງຂໍນ້ຳດື່ມແລະກຳລັງດື່ມນ້ຳຢູ່ພໍດີເມື່ອນາຍໝໍກວດຮ່າງກາຍລຽບລ້ອຍແລ້ວເລນນອກກໍຕ້ອງນອນຮັກສາຕົວຢູ່ໃນໂຮງໝໍອີກເຖິງຫົກເດືອນເພາະກະດູກຂາເບື້ອງໜຶ່ງຫັກຖືງສອງບ່ອນແລະບວມຊ້ຳທົ່ວຄີງ ເມື່ອຫາຍດີແລ້ວລາວກໍຖືກສົ່ງຕົວໃຫ້ໄປເຮັດວຽກຕາມເດີມ.

ຂ້າພະເຈົ້າໄດ້ຮູ້ເລື່ອງນີ້ຈາກເພື່ອນນັກໂທດຂອງເລນນອກອີກເທື່ອໜຶ່ງແລະພາຍຫຼັງກໍໄດ້ຮັບຟັງເລື່ອງອັນປະຫຼາດນີ້ຈາກປາກຂອງລາວເອງ ເລນນອກຍັງເປັນຄົນໜຸ່ມຄະເນເບິ່ງອາຍຸຄົງບໍ່ເກີນສາມສິບປີ ຂ້າພະເຈົ້າໄດ້ຂຽນຄວາມບອກຂອງລາວໄວ້ ລາວເລົ່າວ່າດັ່ງນີ້:

"ເຊົ້າມື້ນັ້ນຂ້າພະເຈົ້າມີຄວາມຮູ້ສຶກວ່າຈະມີເຫດຮ້າຍເກີດຂຶ້ນແລະຮູ້ສຶກບໍ່ສະບາຍໃຈດ້ວຍຂ້າພະເຈົ້າຈຶ່ງໄປຫາທ່ານກະເຣສັນຜູ້ເປັນຫົວໜ້າເໝືອງ ບອກເຖິງຄວາມຮູ້ສຶກຂອງຂ້າພະເຈົ້າ ແລະຂໍໃຫ້ທ່ານມາກວດເບິ່ງອຸໂມງທີ່ຂ້າພະເຈົ້າກຳລັງຂຸດຖ່ານຫີນຢູ່ ທ່ານກໍມາແລະເມື່ອເບິ່ງຄືຈະກວດຢ່າງຄັກແນ່ທຸກທີ່ທຸກບ່ອນແລ້ວທ່ານກໍສັ່ງໃຫ້ຂ້າພະເຈົ້າຄືນໄປເຮັດວຽກຕາມເດີມ, ບອກວ່າບໍ່ມີອັນຕະລາຍອັນໃດເລີຍແລະຍັງຊ້ຳຄຶດວ່າຂ້າພະເຈົ້າເສຍຈິດແລ້ວດ້ວຍ ຂ້າພະເຈົ້າຄືນໄປເຮັດວຽກໄດ້ປະມານໜຶ່ງຊົ່ວໂມງເຫັນຈະໄດ້ທັນໃດນັ້ນທຸກສິ່ງກໍມືດແລະເໝືອນມີປະຕູໃຫຍ່ເຮັດດ້ວຍເຫຼັກເປີດອອກຕໍ່ໜ້າແລະຂ້າພະເຈົ້າກໍຜ່ານເຂົ້າໄປທັນທີ.

"ຂ້າພະເຈົ້າຄຶດວ່າຂ້າພະເຈົ້າຄົງຕາຍແລ້ວແລະເຂົ້າມາຢູ່ໃນອີກໂລກໜຶ່ງແຕ່ຂ້າພະເຈົ້າເບິ່ງບໍ່ເຫັນໃຜແລະບໍ່ໄດ້ຍິນສຽງອັນໃດເລີຍຂ້າພະເຈົ້າຈຶ່ງເໜັງຕົວໄປຈາກປະຕູນັ້ນແລະຍ່າງໄປເລື້ອຍ ໆ ບຶດໜຶ່ງຂ້າພະເຈົ້າກໍໄປເຖິງຝັ່ງແມ່ນ້ຳ

ກວ້າງແຫ່ງໜຶ່ງ ທີ່ນັ້ນບໍ່ມືດບໍ່ສະຫວ່າງແຕ່ມີແສງພໍພຸມພູ້ເທົ່ານັ້ນ ຂ້າພະເຈົ້າຢູ່ທີ່ຝັ່ງແມ່ນ້ຳນີ້ບໍ່ດົນປານໃດກໍໄດ້ຍິນສຽງພາຍເຮືອມາໃກ້ ໆ ບຶດໜຶ່ງຄົນທີ່ຢູ່ໃນເຮືອລຳນັ້ນກໍພາຍເຮືອເຂົ້າມາຍັງບ່ອນຂ້າພະເຈົ້າຍືນຢູ່ ຂ້າພະເຈົ້າບໍ່ຕຶງເຂົາເບິ່ງຂ້າພະເຈົ້າຢູ່ບຶດໜຶ່ງແລ້ວກໍບອກວ່າເຂົາມາຮັບຂ້າພະເຈົ້າ ແລະບອກຂ້າພະເຈົ້າລົງໄປໃນເຮືອຂ້າມໄປຝັ່ງນັ້ນ ຂ້າພະເຈົ້າກໍເຮັດຕາມໂດຍບໍ່ມີຄວາມເວົ້າຈັກຄຳ ແມ່ນວ່າຂ້າພະເຈົ້າເອງຢາກຈະຖາມເຂົາວ່າແມ່ນໃຜແລະຂ້າພະເຈົ້າຢູ່ໃສແຕ່ເວົ້າບໍ່ອອກລີ້ນຂອງຂ້າພະເຈົ້າເໝືອນຈະຕິດແໜ້ນຢູ່ກັບເພດານ ໃນທີ່ສຸດເຮົາກໍມາເຖິງຝັ່ງຟາກນັ້ນ ຂ້າພະເຈົ້າຂຶ້ນຈາກເຮືອແລະຄົນເຮືອຄົນນັ້ນກໍຫາຍວັບໄປຈາກຕາ

"ດັ່ງນັ້ນຂ້າພະເຈົ້າກໍຖືກຖິ້ມໄວ້ທີ່ຝັ່ງແມ່ນ້ຳຜູ້ດຽວ, ບໍ່ຮູ້ວ່າຈະເຮັດແນວໃດ ເມື່ອຂ້າພະເຈົ້າເບິ່ງໄປທາງໜ້າ ຂ້າພະເຈົ້າເຫັນທາງສອງເສັ້ນຜ່ານໄປຕາມລະຫວ່າງພູເຂົາອັນມືດມົວ ທາງໜຶ່ງນັ້ນກວ້າງແລະຈະມີຫຼາຍຄົນໄດ້ຍ່າງໄປຕາມທາງສາຍນັ້ນ ອີກທາງໜຶ່ງເປັນທາງແຄບຊີ້ໄປສູ່ອີກທິດໜຶ່ງ ຂ້າພະເຈົ້າຈຶ່ງເລືອກເດີນທາງທີ່ມີຄົນໃຊ້ຫຼາຍຄືທາງກວ້າງ ເມື່ອຂ້າພະເຈົ້າຍ່າງບໍ່ໄກປານໃດກໍມືດຫຼາຍຂຶ້ນທຸກເທື່ອ ໆ ແຕ່ຍັງມີແສງວັບແວບມາຈາກລະຍະໄກເຮັດໃຫ້ຂ້າພະເຈົ້າພໍຈະເຫັນທາງຍ່າງໄດ້.

"ບຶດໜຶ່ງຂ້າພະເຈົ້າກໍຈອບກັບຜູ້ໜຶ່ງເຊິ່ງຍາກທີ່ຈະອະທິບາຍເຖິງ ຮູບຮ່າງຂອງມັນໄດ້ຢ່າງຖືກຕ້ອງເພາະມັນໜ້າຢ້ານຈົນເຫຼືອທີ່ຈະບອກໄດ້ ຮູບຮ່າງເໝືອນມະນຸດຢູ່ແດ່ແຕ່ໃຫຍ່ກວ່າມະນຸດຜູ້ອື່ນ ໆ ທີ່ຂ້າພະເຈົ້າເຄີຍເຫັນມາທັງໝົດສ່ວນສູງຂອງມັນຢ່າງໜ້ອຍກໍສອງແມດ ມັນມີປີກໃຫຍ່ຢູ່ຫຼັງ ເນື້ອດຳກ້ຽງເໝືອນຖ່ານຫີນທີ່ຂ້າພະເຈົ້າຂຸດແລະມັນບໍ່ນຸ່ງເສື້ອຜ້າຈັກຜືນເລີຍ.

"ມັນຖືຫອກດວງໃຫຍ່ ດ້າມຫອກອາດຈະຍາວເຖິງຫ້າແມດກໍໄດ້ ດວງຕາຂອງມັນລຸກສະຫວ່າງເໝືອນໂຄມແຂ້ວຂາວເໝືອນໄຂ່ມຸກແລະເໝືອນຈະຍາວຕັ້ງໜຶ່ງນິ້ວ ຮູດັງໃຫຍ່ກວ້າງຫຼາຍແລະແບນເຫຼືອເກີນຈົນບໍ່ໜ້າຈະເອີ້ນວ່າຮູດັງໄດ້ຜົມຂອງມັນອ່ອຍແລະຍາວຕຶງບ່າສຽງຂອງມັນດັງເໝືອນກັບສຽງຮ້ອງຂອງໂຕສິງໃນກົງຂັງຫຼາຍກວ່າສຽງອື່ນທີ່ຂ້າພະເຈົ້າພໍຈະຄິດໄດ້.

"ຂ້າພະເຈົ້າຫາຈະຮູ້ມັນເມື່ອແສງວັບແວບຈາກທີ່ໄກນັ້ນສ່ອງມາວັບໜຶ່ງ ຂ້າພະເຈົ້າຢ້ານຈົນຕົວສັ່ນເໝືອນໃບໄມ້ລົມພັດ ມັນຍົກຫອກຂຶ້ນທຳທ່າຄ້າຍກັບຈະຊັດໃສ່ຂ້າພະເຈົ້າ ຂ້າພະເຈົ້າຍຸດກັບທີ່ ມັນຈຶ່ງບັງຄັບໃຫ້ຂ້າພະເຈົ້າໄປກັບມັນດ້ວຍສຽງໜ້າຢ້ານທີ່ຍັງຕິດຫູຂ້າພະເຈົ້າຢູ່ຈົນບັດນີ້ມັນບອກວ່າມັນມີໜ້າທີ່ນຳທາງຂ້າພະເຈົ້າຕໍ່ໄປ ຂ້າພະເຈົ້າບໍ່ມີທາງໃດຈະຫຼົບໜີໄດ້ກໍຕ້ອງນຳມັນໄປ.

"ເມື່ອເຮົາໄປໄດ້ໄກຈັກໜ້ອຍກໍມີພູໜ່ວຍໃຫຍ່ຂວາງໜ້າເຮົາຢູ່ແລະຕອນທີ່ຢູ່ຕໍ່ໜ້າເຮົານັ້ນຊັນຊີ້ຂຶ້ນໄປເໝືອນກັບພູໜ່ວຍນັ້ນຖືກແບ່ງເປັນສອງສ່ວນແລະສ່ວນໜຶ່ງຖືກຖິ້ມໄປ ເທິງກຳແພງຊັນອັນນີ້ມີຂໍ້ຄວາມທີ່ຂ້າພະເຈົ້າອ່ານໄດ້ຢ່າງຄັກວ່າ "ນີ້ຄືນາລົກ" ຜູ້ທີ່ເອົາຂ້າພະເຈົ້າມາເຂົ້າໄປທີ່ກຳແພງນັ້ນໄດ້ເອົາດ້າມຫອກຂອງມັນເຄາະທີ່ກຳແພງດັງ ໆ ສາມເທື່ອ ປະຕູໃຫຍ່ທີ່ສຸດກໍເປີດທັນໃດ ເຮົາກໍເຂົ້າໄປພາຍໃນກຳແພງແລະຂ້າພະເຈົ້າກໍເຂົ້າໄປກັບຜູ້ນຳທາງຜ່ານພູໜ່ວຍນັ້ນ.

"ເຮົາຍ່າງໄປຖ້າມກາງຄວາມມືດ ສຽງບາດຕີນໜັກ ໆ ຂອງມັນຜູ້ນຳທາງເທົ່ານັ້ນທີ່ເຮັດໃຫ້ຂ້າພະເຈົ້ານຳມັນໄປໄດ້ຖືກຕລອດທາງຂ້າພະເຈົ້າໄດ້ຍິນສຽງຮ້ອງຄາງຄືກັບຄົນກຳລັງຈະຕາຍ ຊ້ຳຍ່າງເຂົ້າໄປສຽງເຫຼົ່ານີ້ກໍຍັງທະວີຫຼາຍຂຶ້ນ ຂ້າພະເຈົ້າໄດ້ຍິນສຽງຮ້ອງຢ່າງຊັດເຈນວ່າ "ຂໍນ້ຳ, ຂໍນ້ຳທ້ອນ" ດັງມາຈາກອີກທາງໜຶ່ງສຽງເໝືອນກັບມີຄົນນັບລ້ານ ໆ ກຳລັງຮ້ອງຄາງຢູ່ໃນລະຍະໄກວ່າ "ນ້ຳ, ຂໍນ້ຳແດ່ທ້ອນ"

“ໃນບໍ່ດົນຜູ້ນຳທາງກໍເຄາະປະຕູອີກປະຕູໜຶ່ງ ປະຕູນັ້ນກໍເປີດອອກຂ້າພະເຈົ້າກໍເຫັນໄດ້ວ່າເຮົາໄດ້ຜ່ານພູອອກມາແລ້ວບັດນີ້ເບື້ອງໜ້າຂ້າພະເຈົ້າ ເປັນທີ່ຮາບກວ້າງໃຫຍ່ແຜ່ອອກໄປແລະຜູ້ນຳທາງກໍໜີຈາກຂ້າພະເຈົ້າເພື່ອຄືນໄປເອົາວິນຍານຂອງຄົນທີ່ບໍ່ພົ້ນອື່ນ ໆ ມາອີກ.

“ຂ້າພະເຈົ້າຢູ່ທີ່ນັ້ນບຶດໜຶ່ງກໍມີອີກຜູ້ໜຶ່ງເຊິ່ງມີລັກສະນະດັ່ງດຽວກັນກັບຜູ້ທຳອິດເປັ່ງໜ້າມາຫາຂ້າພະເຈົ້າແຕ່ຜູ້ນີ້ຖືດາບດວງໃຫຍ່ບໍ່ແມ່ນຖືກຫອກເໝືອນຜູ້ທຳອິດ ມັນບອກຂ້າພະເຈົ້າວ່າຕໍ່ໄປເບື້ອງໜ້າຂ້າພະເຈົ້າຈະໄດ້ປະສົບກັບຄວາມທຸກທໍລະມານ ມັນກ່າວດ້ວຍສຽງທີ່ເຮັດໃຫ້ໃຈຂອງຂ້າພະເຈົ້າຫວັ່ນໄຫວດ້ວຍຄວາມຢ້ານວ່າ “ເຈົ້າຕົກຢູ່ໃນນາລົກແລ້ວ ຄວາມຫວັງທັງໝົດຂອງເຈົ້າກໍບໍ່ມີເຫຼືອຢູ່ເລີຍເມື່ອເຈົ້າຜ່ານພູມາເຖິງທີ່ນີ້ລະຫວ່າງທາງນັ້ນເຈົ້າຄົງໄດ້ຍິນສຽງຮ້ອງຮ່ຳໄຮຂອງບັນດາຄົນບາບທັງຫຼາຍ ຮ້ອງຂໍນ້ຳເພື່ອໃຫ້ຄວາມຊຸ່ມແກ່ລີ້ນອັນແຫ້ງຂອງເຂົາເຫຼົ່ານັ້ນແລ້ວຕາມທາງເດີນນັ້ນມີປະຕູເປີດໄປສູ່ບຶງໄຟແລະນີ້ແຫຼະຈະເປັນສິ່ງທີ່ເຈົ້າຈະຕ້ອງປະສົບ ແຕ່ກ່ອນທີ່ເຈົ້າຈະຖືກສົ່ງໄປຍັງສະຖານທີ່ມີແຕ່ຄວາມທຸກທໍລະມານໂດຍບໍ່ມີວັນໄດ້ຫຼຸດພົ້ນອອກມາເພາະຜູ້ທີ່ຖືກສົ່ງໃຫ້ໄປຢູ່ທີ່ນັ້ນຈະບໍ່ມີຄວາມຫວັງອັນໃດອີກເລີຍ ເຮົາຍອມໃຫ້ເຈົ້າຢູ່ທີ່ນີ້ຈັກໜ້ອຍໜຶ່ງກ່ອນ, ເຈົ້າຈະໄດ້ເຫັນບ່ອນທີ່ເຈົ້າຄວນຈະໄດ້ມີ ຄວາມສຸກສຳລານຢູ່ທີ່ນັ້ນແທນທີ່ຈະຕ້ອງມາຮັບຄວາມທົນທຸກດັ່ງນີ້.

“ໄກອອກໄປເໜືອຂ້າພະເຈົ້ານັ້ນຂ້າພະເຈົ້າເຫັນເມືອງອັນງົດງາມເຊິ່ງເຮົາເຄີຍອ່ານພົບໃນພຣະຄຣິສຕະທຳຄຳພີ ກຳແພງເມືອງທີ່ສ້າງດ້ວຍແກ້ວມະນີໂຊດນັ້ນງາມຫຼວງຫຼາຍ ໄກອອກໄປອີກຂ້າພະເຈົ້າເຫັນບ່ອນຮາບກວ້າງມີດອກໄມ້ອັນງາມທົ່ວບໍລິເວນ ຂ້າພະເຈົ້າເຫັນແມ່ນ້ຳສຳລັບຊີວິດແລະທະເລທີ່ໃສຄືແກ້ວ ໝູ່ເທວະດາຈຳນວນຫຼາຍຜ່ານເຂົ້າອອກຈາກປະຕູແຫ່ງເມືອງນັ້ນແລະຮ້ອງເພງມ່ວນຈັບອົກຈັບໃຈເຕັມທີ ໃນໝູ່ນັ້ນຂ້າພະເຈົ້າກໍແລເຫັນແມ່ຢູ່ດ້ວຍແມ່ເຖິງແກ່ກຳດ້ວຍຄວາມເສຍໃຈໃນຄວາມຊົ່ວຂອງຂ້າພະເຈົ້າເມື່ອສອງສາມປີມາແລ້ວ ເພິ່ນຫຼຽວມາຫາຂ້າພະເຈົ້າແລະເໝືອນຈະເອີ້ນຂ້າພະເຈົ້າດ້ວຍແຕ່ຂ້າພະເຈົ້າຍ້າຍທີ່ຈະໄປໃສບໍ່ໄດ້ຮູ້ສຶກເໝືອນກັບວ່າມີຂອງໜັກຈ່ອງຕົວເອົາໄວ້ມີລົມພັດຄ່ອຍ ໆ ເອົາກິ່ນຫອມຂອງດອກໄມ້ເຫຼົ່ານັ້ນມາສູ່ຂ້າພະເຈົ້າແລະຂ້າພະເຈົ້າໄດ້ຍິນສຽງເພງອອນຖືກໃຈຂອງເທວະດາເຮັດໃຫ້ຂ້າພະເຈົ້າຮ້ອງອອກມາວ່າ “ຂ້າພະເຈົ້າຢາກຈະເປັນຜູ້ໜຶ່ງໃນຈຳນວນນັ້ນເຫຼືອເກີນ.”

“ຂະນະທີ່ຂ້າພະເຈົ້າກຳລັງຊົມຢູ່ກັບຮູບອັນໜ້າສຸກໃຈ, ຮູບອັນງາມນີ້ກໍໄດ້ຖືກດຶງໄປຈາກຂ້າພະເຈົ້າເພາະບັດນີ້ເຖິງເວລາທີ່ຈະໄດ້ເຂົ້າສູ່ວິຖີຂອງຊີວິດຂອງຂ້າພະເຈົ້າແລ້ວ ຜູ້ນັ້ນສັ່ງໃຫ້ຂ້າພະເຈົ້ານຳມັນໄປ.

“ຂ້າພະເຈົ້າລົ້ມຄືນເຂົ້າໄປຕາມທາງເດີນອັນມືດໃນພູເຂົານັ້ນອີກເທື່ອໜຶ່ງກໍມາເຖິງປະຕູ ໆ ໜຶ່ງຂ້າງທາງຍ່າງເຮົາເຂົ້າໄປທາງປະຕູນັ້ນແລະສຸດທ້າຍກໍເຂົ້າປະຕູອີກເທື່ອໜຶ່ງ ບັດນີ້ຂ້າພະເຈົ້າກໍມາຢູ່ຕໍ່ໜ້າບຶງໄຟແລ້ວ ເບື້ອງໜ້າຂ້າພະເຈົ້ານັ້ນເປັນບຶງໄຟທີ່ມີໄຟແລະມາດໄກສຸດຊົ່ວຕາລຸກຢູ່ ແປວໄຟໂຫວ່ນໃຫຍ່ພັດເປັນໜ່ວຍເຂົ້າຝັ່ງ ແປວໄຟອັນຮ້ອງແຮງຕຳກັນແລ້ວພຸ່ງເຂົ້າໄປໃນອາກາດເໝືອນທະເລໃນຍາມມີລົມແຮງ ເທິງຍອດຂອງແປວໄຟເຫຼົ່ານັ້ນຂ້າພະເຈົ້າຫັນຄົນຖືກແປວໄຟຫອບຂຶ້ນໄປດ້ວຍແລ້ວກໍຖືກດູດລົງໄປສູ່ກົ້ນບຶງໄຟອີກ ເມື່ອຖືກແປວໄຟຫອບຂຶ້ນໄປຢູ່ເທິງຍອດແປວອັນໜ້າຢ້ານນັ້ນຊົ່ວອຶດໃຈໜຶ່ງເຂົາເຫຼົ່ານັ້ນກໍຈະຮ້ອງຂໍນ້ຳດ້ວຍສຽງທີ່ເຮັດໃຫ້ຈິດໃຈຫວັ່ນໄຫວເພາະຄວາມສົງສານບຶງໄຟອັນກວ້າງໃຫຍ່ນີ້ສົ່ງສຽງຮ້ອງຄາງກ້ອງປົນກັບສຽງຮ້ອງຄາງຂອງຄົນບາບເຫຼົ່ານັ້ນ.

“ຂ້າພະເຈົ້າໄປເບິ່ງປະຕູທີ່ຂ້າພະເຈົ້າຜ່ານເຂົ້າມາ ບຶດໜຶ່ງອ່ານພົບຂໍ້ຄວາມອັນໜ້າຢ້ານວ່າ “ນີ້ເປັນຄວາມພິນາດຂອງເຈົ້າຕລອດໄປເປັນນິດບໍ່ມີສິ້ນສຸດ” ໃນທັນໃດນັ້ນຂ້າພະເຈົ້າກໍຮູ້ສຶກວ່າພື້ນດິນເບື້ອງລຸ່ມທີ່ຂ້າພະເຈົ້າຍືນຢູ່ໄດ້ແຍກອອກແລະຂ້າພະເຈົ້າກໍຈົມລົງສູ່ບຶງໄຟແລະຮູ້ສຶກຢາກນ້ຳເຫຼືອເກີນ.

"ເມື່ອຂ້າພະເຈົ້າຮ້ອງຂໍນ້ຳນັ້ນຂ້າພະເຈົ້າກໍມືນຕາຂຶ້ນແລະພົບວ່າຂ້າພະເຈົ້ານອນຢູ່ໃນໂຮງໝໍປະຈຳຄຸກນັ້ນເອງ ຂ້າພະເຈົ້າໄດ້ພົບເຫດການນີ້ມາແລ້ວແລະຂ້າພະເຈົ້າຍິນດີທີ່ຍັງມີຊີວິດຢູ່ ຂ້າພະເຈົ້າບໍ່ສົງໄສອີກແລ້ວວ່າສະຫວັນນາລົກມີຈິງແທ້ເໝືອນກັບທີ່ພຣະຄຣິສຕທຳຄຳພີໄດ້ບອກໄວ້ແລະຂ້າພະເຈົ້າຄັກໃຈວ່າຂ້າພະເຈົ້າຈະບໍ່ໄດ້ຄືນໄປທີ່ນັ້ນອີກຢ່າງແນ່ນອນ.

"ເມື່ອຂ້າພະເຈົ້າຮູ້ເມື່ອຄືງທີ່ໂຮງໝໍພົບວ່າຕົວເອງຍັງມີຊີວິດຢູ່ແລະຢູ່ໃນໂລກນີ້ດັ່ງເກົ່າອີກເທື່ອໜຶ່ງຂ້າພະເຈົ້າກໍໄດ້ຖວາຍຈິດໃຈໃຫ້ຕໍ່ພຣະເຈົ້າທັນທີ ຂ້າພະເຈົ້າຈະມີຊີວິດຢູ່ແລະຕາຍແບບຄຣິສຕຽນ ຄວາມໜ້າຢ້ານຂອງນາລົກແລະຄວາມງາມຂອງສະຫວັນເຊິ່ງຂ້າພະເຈົ້າໄດ້ເຫັນມານັ້ນຂ້າພະເຈົ້າບໍ່ອາດລືມໄດ້."

## ທ່ານຈະພົ້ນຈາກນາຣົກໄດ້ແນວໃດ ?

1. "ຄົນທັງປວງໄດ້ເຮັດຜິດບາບທຸກຄົນແລະຮູ້ສຶກຂາດຈາກພຣະລັດສະໝີຂອງພຣະເຈົ້າ" (ພຣະທຳໂລມ ບົດ 3:23) ທ່ານຕ້ອງຍອມຮັບຕໍ່ພຣະເຈົ້າວ່າທ່ານເປັນຄົນບາບ.

2. "ຄົນທຸກຄົນໃດທີ່ຈະຮ້ອງອອກພຣະນາມຂອງພຣະອົງເຈົ້າກໍຈະພົ້ນ" (ພຣະທຳໂລມ ບົດ 10:13) ຈົ່ງຄຸກເຂົ່າລົງອ້ອນວອນອອກພຣະນາມຂອງພຣະເຢຊູຄຣິດດ້ວຍຈິດໃຈຊື່ສັດແລະຢາກຈະໃຫ້ພຣະອົງຊຳລະບາບຂອງທ່ານຢ່າງແທ້ຈິງ.

3. "ຖ້າເຈົ້າຮັບດ້ວຍປາກວ່າພຣະເຢຊູເປັນພຣະອົງເຈົ້າທັງເຊື່ອໃນໃຈວ່າພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງເປັນຄືນຂຶ້ນມາຈາກໝູ່ຄົນຕາຍແລ້ວເຈົ້າກໍຈະພົ້ນ" (ພຣະທຳໂລມບົດ 10:9) ຈົ່ງເຊື່ອວາງໃຈໃນພຣະສັນຍາຂອງພຣະເຈົ້າແລະເຊື່ອວ່າພຣະເຢຊູໄດ້ສະລະພຣະໂລຫິດເພື່ອລົບລ້າງຄວາມບາບຂອງທ່ານ ພຣະອົງໄດ້ສິ້ນພຣະຊົນທີ່ໄມ້ກາງແຂນເພື່ອທ່ານຈະພົ້ນບໍ່ຕ້ອງໄປຮັບຄວາມທຸກທົນທໍລະມານໃນນາລົກເປັນນິດ.

ເຊີນທ່ານຮັບເອົາຄວາມພົ້ນນີ້ມື້ນີ້.